## ທ່ານ ທອງສິງ ທຳມະວົງ ເຄື່ອນໄຫວຢ້ຽມຢາມເຂດບໍ່ກົ່ວໂພນຕິ້ວ

(ປຊຊ):ໃນວັນທີ 20 ສິງຫາ 2010 ທ່ານ ທອງສິງ ທຳມະວົງ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ທ່ານ ສົມນຶກ ໂສມຈັນ ຄະນະປະຈຳພັກແຂວງ, ຫົວຫນ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນພ້ອມ ດ້ວຍຫົວຫນ້າພະແນກການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຢ້ຽມຢາມເຂດຂຸດຄົ້ນແຮ່ທາດບໍ່ກົ່ວໂພນຕິ້ວ ແລະ ພໍ່ແມ່ປະຊາຊົນພາຍໃນເຂດດັ່ງກ່າວ. ໃນການເຄື່ອນໄຫວຢ້ຽມຢາມຄັ້ງນີ້ແມ່ນໄດ້ຖືກຮັບຕ້ອນຢ່າງອົບອຸ່ນຈາກ ທ່ານ ແກ້ວລັມດອນ ຈັນທະປານີ ຮອງເຈົ້າເມືອງໆຫີນບູນ ແລະທ່ານ ນາງ ວັນດີ ດວງມະນີວອນ ປະທານບໍລິສັດ ພັດທະນານະຄອນຫລວງວຽງຈັນ ສີຫາລາດແຮ່ທາດຄົບວົງຈອນຈຳກັດ ພ້ອມດ້ວຍຄະນະຜູ້ບໍລິຫານຂອງບໍລິສັດ. ໄດ້ເຊັນສັນຍາກັບລັດຖະບານໃນວັນທີ 2/11/2009 ໃນເນື້ອທີ່ 2.900 ເຮັກຕາ ເພື່ອຂຸດຄົ້ນແຮ່ຊືນ, ສັງກະສີ, ປະຈຸບັນນີ້ແມ່ນຢູ່ໃນໄລຍະການບຸກເບີກຂຸດຄົ້ນ. ພ້ອມນີ້ ບໍລິສັດ ກໍ່ໄດ້ລົງໄປສົມທົບກັບພື້ນຖານຄື: ບ້ານທ່າຍໍ, ບ້ານບໍ່ແຫນ່ງ, ບ້ານຫ້ວຍຄຳ, ບ້ານຫ້ວຍອອນ ແລະ ພາຍໃນ 12 ບ້ານເຂດບໍ່ໂພນຕິ້ວ. ໃນນີ້ ບ້ານທ່າຍໍ ແລະ ບ້ານບໍ່ແຫນ່ງແມ່ນໄດ້ຮັບຄ່າທົດແທນຈາກບໍລິສັດຈຳນວນປະມານ 85 ລ້ານກີບ ມອບໃຫ້ບ້ານ ແລະບຸກຄົນ ເພື່ອແກ້ໄຂຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ເນື່ອງຈາກວ່າພື້ນທີ່ການຜະລິດ ຂອງສອງບ້ານດັ່ງກ່າວແມ່ນໄດ້ຮັບຜົນກະທົບ ຈາກການບຸກເບີກກໍ່ສ້າງທາງເຂົ້າໄປຫາແຫລ່ງຂຸດຄົ້ນແຮ່ທາດຂອງ ບໍລິສັດ ພ້ອມນັ້ນທາງບໍລິສັດ ຍັງໄດ້ຊ່ວຍເຫລືອສ້າງລະບົບສາຍນ້ຳລິນ ຈາກພູລົງມາຫາ ບ້ານທ່າຍໍ ໄດ້ນຳໃຊ້ ເຊິ່ງມີຄວາມຍາວປະມານ 750 ແມັດມູນຄ່າປະມານ 75 ລ້ານກວ່າກີບ. ມາຮອດປະຈຸບັນບໍ່ກົ່ວໂພນຕິ້ວເມືອງຫີນບູນມີບັນ ດາບໍລິສັດຕ່າງໆເຂົ້າໄປສຳປະທານເຖິງ 12 ບໍລິສັດ. ໃນໂອກາດທີ່ທ່ານປະທານສະພາແຫ່ງຊາດ ສປປ ລາວ ໄດ້ເດີນທາງໄປ ຢ້ຽມຢາມພໍ່ແມ່ປະຊາຊົນ ແລະ ພື້ນຖານການຜະລິດຢູ່ບໍ່ກົ່ວໂພນຕິ້ວ ແລະໄດ້ຮັບຟັງການລາຍງານສະພາບການໂດຍລວມຂອງກຸ່ມບ້ານບໍ່ໂພນຕິ້ວ ຊຶ່ງປະຊາຊົນສ່ວນໃຫຍ່ປະກອບອາຊີບເຮັດນາ, ເຮັດສວນ, ປູກຝັງ, ລ້ຽງສັດ, ຄ້າຂາຍ, ເປັນກຳມະກອນໃຫ້ ບໍລິສັດ. ຍ້ອນພູມສັນຖານຂອງກຸ່ມດັ່ງກ່າວ ມີພູຜາກວມເອົາສ່ວນໃຫຍ່ເນື້ອທີ່ນາແມ່ນມີ ຈຳກັດ, ດ້ານຜົນຜະລິດແມ່ນຍັງຕ່ຳ. ສຳລັບຈຸດສຸມ ແລະ ເປົ້າຫມາຍຂອງເມືອງໄດ້ສຸມໃສ່ໃນ 5 ປີຕໍ່ຫນ້າພາຍໃນກຸ່ມ ດັ່ງກ່າວຈະພ້ອມກັນສ້າງໃຫ້ກຸ່ມດັ່ງກ່າວເປັນກຸ່ມທີ່ຜະລິດກະສິ ກຳລ້ຽງສັດຕິດພັນກັບອຸດສາຫະກຳບໍ່ແຮ່ ແລະ ການທ່ອງທ່ຽວ. ຜ່ານການຈັດຕັ້ງປະຕິບັດ ແລະ ນຳພາແຕ່ລະຂົງເຂດວຽກງານກໍ່ເຫັນວ່າຍັງມີບາງ ດ້ານກໍ່ຍັງມີອັນຄົງຄ້າງເປັນຕົ້ນແມ່ນການຫັນເອົາລະບຽບຫລັກການ, ການສຶກສາທາງດ້ານການເມືອງ ແນວຄິດໃນຖັນແຖວພະນັກງານ ສະມາຊິກພັກກໍ່ຍັງບໍ່ທັນໄດ້ເລິກເຊິ່ງ, ທ່າແຮງທາງດ້ານການກໍ່ສ້າງເສດຖະກິດຂອງຊຸມຊົນ ແມ່ນມີຫລາຍພໍສົມຄວນ ແຕ່ວິທີການຈັດຕັ້ງປະຕິບັດຍັງຂາດຄວາມເອົາໃຈໃສ່, ການຈັດສັນອາຊີບຄົງທີ່ ຍັງມີຄວາມຫຍຸ້ງຍາກເນື່ອງຈາກພື້ນທີ່ສ່ວນໃຫຍ່ ແມ່ນເປັນເຂດສຳ ປະທານຂຸດຄົ້ນບໍ່ແຮ່ ຂອງບັນດາບໍລິສັດຕ່າງໆ. ທ່ານ ທອງສິງ ທຳມະວົງ ກໍ່ໄດ້ຊີ້ທິດເຍືອງທາງໃຫ້ຄະນະພັກ - ອຳນາດການປົກຄອງເມືອງຫີນບູນ, ພໍ່ແມ່ປະຊາຊົນຕະຫລອດເຖິງພາກສ່ວນ ບໍລິສັດ ຕ້ອງໄດ້ມີການປະສານສົມ ທົບຊ່ວຍເຫລືອເຊິ່ງກັນ ແລະ ກັນ ໂດຍສະເພາະກໍ່ແມ່ນ ບໍລິສັດທີ່ມາສຳປະທານການຂຸດຄົ້ນແຮ່ຈະຕ້ອງໄດ້ສ້າງພື້ນ ຖານໂຄງລ່າງທາງດ້ານສາທາລະນຸປະໂພກຂັ້ນພື້ນຖານໃຫ້ແກ່ພໍ່ແມ່ປະຊາຊົນພາຍໃນເຂດດັ່ງກ່າວພ້ອມນັ້ນທ່ານກໍ່ໄດ້ຮຽກຮ້ອງໃຫ້ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫລີກ ຈົ່ງໄດ້ຫັນອອກຈາກອາຊີບແບບດັ້ງເດີມ ກ້າວໄປສູ່ອາຊີບກຸ່ມກິນທັງນີ້ກໍ່ເພື່ອຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນເທື່ອລະກ້າວ.